**BIÊN BẢN HỘI ĐÀM**
**Giữa**
**Đoàn đại biểu Ủy ban Mặt trận Tổ quốc Việt Nam tỉnh Điện Biên**
**nước Cộng hòa xã hội chủ nghĩa Việt Nam**
**với**
**Đoàn đại biểu Mặt trận Lào xây dựng đất nước tỉnh Luông-pha-bang,**
**nước Cộng hòa Dân chủ Nhân dân Lào**

Thực hiện Biên bản ghi nhớ giữa Đoàn đại biểu Đảng, chính quyền tỉnh Điện Biên, nước Cộng hòa xã hội chủ nghĩa Việt Nam và Đoàn đại biểu Đảng, chính quyền tỉnh Luông-pha-bang, nước Cộng hòa Dân chủ Nhân dân Lào (ký kết ngày 18/7/2022 tại tỉnh Luông-pha-bang); Biên bản ghi nhớ giữa Mặt trận Lào xây dựng đất nước tỉnh Luông-pha-bang và Ủy ban Mặt trận Tổ quốc Việt Nam tỉnh Điện Biên (ký kết ngày 17/12/2022 tại tỉnh Luông-pha-bang); để tăng cường tình hữu nghị, quan hệ hợp tác giữa Ủy ban Mặt trận Tổ quốc Việt Nam tỉnh Điện Biên và Mặt trận Lào xây dựng đất nước tỉnh Luông-pha-bang.

Ngày 20/6/2024, tại tỉnh Điện Biên, nước Cộng hòa xã hội chủ nghĩa Việt Nam, Đoàn đại biểu của Ủy ban Mặt trận Tổ quốc Việt Nam tỉnh Điện Biên, nước Cộng hòa xã hội chủ nghĩa Việt Nam do đồng chí Lò Văn Mừng, Ủy viên Ban Thường vụ Tỉnh ủy, Chủ tịch Ủy ban Mặt trận Tổ quốc Việt Nam tỉnh làm Trưởng đoàn và Đoàn đại biểu của Mặt trận Lào xây dựng đất nước tỉnh Luông-pha-bang, nước Cộng hòa Dân chủ Nhân dân Lào do đồng chí Bun Sồm Khun Mạ Ny, Ủy viên Ban Thường vụ Tỉnh ủy, Chủ tịch Mặt trận Lào xây dựng đất nước tỉnh Luông-pha-bang làm Trưởng đoàn đã tiến hành hội đàm.

Trên tinh thần đoàn kết, hữu nghị đặc biệt, tin cậy và hiểu biết lẫn nhau, Mặt trận hai tỉnh đã thông tin cho nhau một số nét chính của tỉnh, tình hình hoạt động, cơ cấu tổ chức bộ máy và một số kinh nghiệm trong hoạt động công tác Mặt trận. Đồng thời, thống nhất đánh giá kết quả hoạt động hữu nghị giai đoạn 2022 - 2024 và đề ra phương hướng quan hệ hữu nghị, trao đổi kinh nghiệm tổ chức hoạt động công tác Mặt trận giai đoạn 2024 - 2026 như sau:

## I. ĐÁNH GIÁ KẾT QUẢ QUAN HỆ HỮU NGHỊ GIAI ĐOẠN 2022 - 2024

1. Dưới sự lãnh đạo của Đảng Cộng sản Việt Nam, Đảng nhân dân Cách mạng Lào, trực tiếp là Ban Chấp hành Đảng bộ tỉnh Điện Biên và Ban Chấp hành Đảng bộ tỉnh Luông-pha-bang; sự chỉ đạo của Ủy ban Trung ương Mặt trận Tổ quốc Việt Nam, Trung ương Mặt trận Lào xây dựng đất nước, hoạt động công tác Mặt trận của mỗi tỉnh tiếp tục được đổi mới và phát triển bền vững.

2. Mặt trận hai tỉnh đã thường xuyên thông báo cho nhau về tình hình phát triển kinh tế - xã hội của mỗi tỉnh. Tham dự các ngày lễ, hoạt động quan trọng trong

năm như: Các hoạt động Kỷ niệm 60 thiết lập quan hệ ngoại giao Việt Nam - Lào (05/9/1962 - 05/9/2022), 45 năm ký Hiệp ước Hữu nghị và Hợp tác Việt Nam - Lào (18/7/1977 - 18/7/2022); Kỷ niệm 70 năm Chiến thắng Điện Biên Phủ (07/5/1954 - 07/5/2024).

3. Mặt trận hai tỉnh đã trao đổi, chia sẻ kinh nghiệm hoạt động trong công tác Mặt trận về:

- Công tác tập hợp, xây dựng khối đại đoàn kết dân tộc, thực hiện dân chủ, tăng cường đồng thuận xã hội. Công tác tuyên truyền giáo dục tư tưởng, chính trị cho Nhân dân hai tỉnh về truyền thống quan hệ hữu nghị, đoàn kết đặc biệt và hợp tác toàn diện giữa Việt Nam - Lào, Lào - Việt Nam.

- Kinh nghiệm chủ trì phát động và triển khai thực hiện các cuộc vận động, các phong trào thi đua do Mặt trận chủ trì và phát động. Việc vận động ủng hộ và sử dụng các loại quỹ như: Quỹ người nghèo, quỹ cứu trợ...

- Công tác xây dựng Đảng, xây dựng chính quyền địa phương, bảo vệ quyền và lợi ích hợp pháp, chính đáng của Nhân dân; thực hiện giám sát và phản biện xã hội; tập hợp, tổng hợp ý kiến, kiến nghị của cử tri và Nhân dân để phản ánh, kiến nghị với Đảng, Nhà nước.

- Công tác mở rộng và nâng cao hiệu quả hoạt động đối ngoại Nhân dân, tăng cường đoàn kết hữu nghị và hợp tác quốc tế. Đặc biệt là thúc đẩy Nhân dân các dân tộc hai nước đi lại, trao đổi văn hóa - xã hội, trao đổi hàng hóa.

- Công tác nâng cao năng lực hoạt động của hệ thống Mặt trận các cấp đáp ứng yêu cầu nhiệm vụ trong giai đoạn mới.

**II. PHƯƠNG HƯỚNG QUAN HỆ HỮU NGHỊ GIAI ĐOẠN 2024 - 2026**

1. Mặt trận hai tỉnh tiếp tục tăng cường tuyên truyền, giáo dục truyền thống cách mạng, mối quan hệ hữu nghị, đoàn kết đặc biệt và hợp tác toàn diện giữa hai Đảng, hai Nhà nước nói chung, giữa hai tỉnh Điện Biên và tỉnh Luông-pha-bang nói riêng cho cán bộ, công chức Mặt trận và Nhân dân của hai tỉnh.

2. Hai tỉnh tiếp tục phối hợp tuyên truyền, vận động quần chúng nhân dân tham gia tự quản đường biên, mốc quốc giới; tăng cường hợp tác kết nghĩa cụm bản giáp biên của hai Bên để tăng cường đoàn kết, hợp tác phát triển kinh tế - xã hội, hợp tác trong công tác tuyên truyền, vận động quần chúng nhân dân tích cực đấu tranh tố giác các loại tội phạm, đảm an ninh trật tự, không nhập cảnh trái phép, kết hôn không giá thú, buôn lậu…

3. Mặt trận hai tỉnh thống nhất tăng cường hợp tác, trao đổi thông tin, bài học kinh nghiệm trong hoạt động công tác Mặt trận nhằm không ngừng nâng cao vai trò, trách nhiệm trong lãnh đạo, chỉ đạo thực hiện nhiệm vụ chính trị của Mặt trận hai tỉnh và cán bộ, công chức của mỗi Bên.

4. Mặt trận hai tỉnh thống nhất thời gian tổ chức gặp gỡ, trao đổi kinh nghiệm giữa hai bên, hai năm một lần theo hình thức luân phiên chủ trì.

**III. TỔ CHỨC THỰC HIỆN**

1. Hai Bên nhất trí giao cho Ban Dân chủ - Pháp luật Ủy ban Mặt trận Tổ quốc Việt Nam tỉnh Điện Biên và Văn phòng Mặt trận Lào xây dựng đất nước tỉnh Luông-pha-bang chủ động phối hợp tham mưu tổ chức thực hiện đạt hiệu quả.

2. Cuộc gặp gỡ, trao đổi kinh nghiệm lần sau sẽ được tổ chức tại tỉnh Luông-pha-bang, thời gian cụ thể sẽ do Mặt trận 2 Bên trao đổi và thống nhất.

Cuộc Hội đàm kết thúc vào hồi 11 giờ, ngày 20 tháng 6 năm 2024, tại tỉnh Điện Biên, nước Cộng hòa xã hội chủ nghĩa Việt Nam.

Biên bản hội đàm này được lập thành hai (02) bản bằng tiếng Việt Nam và tiếng Lào, có giá trị như nhau, mỗi Bên giữ một (01) bản.

Biên bản hội đàm này có hiệu lực kể từ ngày ký đến hết ngày 31/12/2026./.

*Điện Biên, ngày      tháng 6 năm 2024*

| TM. ĐOÀN ĐẠI BIỂU ỦY BAN MẶT TRẬN TỔ QUỐC VIỆT NAM TỈNH ĐIỆN BIÊN | TM. ĐOÀN ĐẠI BIỂU MẶT TRẬN LÀO XÂY DỰNG ĐẤT NƯỚC TỈNH LUÔNG-PHA-BANG |
|---|---|
| **TRƯỞNG ĐOÀN** | **TRƯỞNG ĐOÀN** |
| **Lò Văn Mừng** | **Bun Sồm Khun Mạ Ny** |

# ບົດບັນທຶກກອງປະຊຸມພົບປະແລກປ່ຽນ
# ລະຫວ່າງ
# ຄະນະກຳມະການແນວໂຮມແຫ່ງຊາດຫວຽດນາມ ແຂວງດຽນບຽນ, ສາທາລະນະລັດສັງຄົມນິຍົມຫວຽດນາມ ແລະ ຄະນະກຳມະການແນວລາວສ້າງຊາດແຂວງຫຼວງພະບາງ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ປີ 2024)

ໂດຍປະຕິບັດຕາມ ບົດບັນທຶກຊ່ວຍຈຳ ລະຫວ່າງ ຄະນະຜູ້ແທນພັກ ແລະ ອົງການປົກຄອງແຂວງດຽນບຽນ ສສ ຫວຽດນາມ ແລະ ຄະນະຜູ້ແທນພັກ ແລະ ອົງການປົກຄອງແຂວງຫຼວງພະບາງ ສປປ ລາວ ລົງໃນວັນທີ 18 ກໍລະກົດ 2022 ທີ່ແຂວງຫຼວງພະບາງ; ບົດບັນທຶກຊ່ວຍຈຳ ລະຫວ່າງ ຄະນະກຳມະການແນວລາວສ້າງຊາດແຂວງຫຼວງພະບາງ ແລະ ຄະນະກຳມະການແນວໂຮມແຫ່ງຊາດຫວຽດນາມແຂວງດຽນບຽນ ລົງໃນວັນທີ 17 ທັນວາ 2022 ຢູ່ແຂວງຫຼວງພະບາງ; ເພື່ອເພີ່ມທະວີການພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ຄະນະກຳມະການແນວໂຮມແຫ່ງຊາດຫວຽດນາມແຂວງດຽນບຽນ ແລະ ຄະນະກຳມະການແນວລາວສ້າງຊາດ ແຂວງຫຼວງພະບາງ.

ມື້ນີ້ວັນທີ 20 ມິຖຸນາ 2024 ຢູ່ທີ່ແຂວງດຽນບຽນ ສສ ຫວຽດນາມ, ຄະນະຜູ້ແທນຄະນະກຳມະການແນວໂຮມແຫ່ງຊາດຫວຽດນາມ ແຂວງດຽນບຽນ ສສ ຫວຽດນາມ ນຳໂດຍ **ສະຫາຍ ລໍ່ ວັນມົ່ງ**, ກຳມະການປະຈຳພັກແຂວງ, ປະທານຄະນະກຳມະການແນວໂຮມແຫ່ງຊາດຫວຽດນາມແຂວງດຽນບຽນ ເປັນຫົວໜ້າຄະນະ ແລະ ຄະນະຜູ້ແທນຄະນະກຳມະການແນວລາວສ້າງຊາດແຂວງຫຼວງພະບາງ ນຳໂດຍ **ສະຫາຍ ບຸນສົມ ຄຸນມະນີ**, ກຳມະການປະຈຳ ພັກແຂວງ, ປະທານແນວລາວສ້າງຊາດແຂວງຫຼວງພະບາງ ເປັນຫົວໜ້າຄະນະ ຮ່ວມດຳເນີນກອງປະຊຸມພົບປະແລກປ່ຽນ.

ບົນຈິດໃຈສາມັກຄີ, ມິດຕະພາບແບບພິເສດ, ມີຄວາມເຊື່ອໝັ້ນ ແລະ ຄວາມເຂົ້າອົກເຂົ້າໃຈເຊິ່ງກັນ ແລະ ກັນ ແນວລາວທັງສອງແຂວງ ໄດ້ແຈ້ງໃຫ້ກັນຊາບກ່ຽວກັບບາງເນື້ອໃນໂດດເດັ່ນຂອງແຂວງ, ສະພາບການເຄື່ອນໄຫວ, ໂຄງປະກອບ ກົງຈັກການຈັດຕັ້ງ ແລະ ບາງບົດຮຽນປະສົບການບາງຢ່າງໃນການເຄື່ອນໄຫວ ວຽກງານແນວລາວ. ພ້ອມກັນນັ້ນ, ເຫັນດີເປັນເອກະພາບກັນ ຕີລາຄາໝາກຜົນການເຄື່ອນໄຫວມິດຕະພາບ ໄລຍະປີ 2022 – 2024 ແລະ ວາງທິດທາງແຜນການພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ແລກປ່ຽນບົດຮຽນປະສົບການໃນການຈັດຕັ້ງການເຄື່ອນໄຫວວຽກງານແນວລາວໄລຍະປີ 2024-2026 ມີດັ່ງນີ້:

**I. ຕີລາຄາໝາກຜົນການພົວພັນມິດຕະພາບ ໄລຍະປີ 2022 – 2024**

1. ພາຍໃຕ້ການນຳພາຂອງພັກກອມມູນິດຫວຽດນາມ ແລະ ພັກປະຊາຊົນປະຕິວັດລາວ ເຊິ່ງໄດ້ນຳພາ-ຊີ້ນຳ ໂດຍກົງຈາກຄະນະບໍລິຫານງານອົງຄະນະພັກແຂວງດຽນບຽນ ແລະ ຄະນະບໍລິຫານງານອົງຄະນະພັກແຂວງຫຼວງພະບາງ, ການ ຊີ້ນຳ-ນຳພາ ຂອງຄະນະກຳມະການສູນກາງແນວໂຮມແຫ່ງຊາດຫວຽດນາມ ແລະ ຄະນະກຳມະການສູນ ກາງແນວ ລາວສ້າງຊາດ, ການເຄື່ອນໄຫວວຽກງານແນວລາວຂອງແຕ່ລະແຂວງ ສືບຕໍ່ມີການປ່ຽນແປງໃໝ່ ແລະ ມີການພັດທະນາ ຢ່າງໝັ້ນຄົງ.

2. ແນວລາວສອງແຂວງໄດ້ແຈ້ງໃຫ້ກັນຊາບຢ່າງປົກກະຕິກ່ຽວກັບ ສະພາບການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະແຂວງ, ເຂົ້າຮ່ວມໃນວັນປະຫວັດຊາດ ແລະ ກິດຈະກໍາຕ່າງໆ ທີ່ສໍາຄັນພາຍໃນປີ, ໂດຍສະເພາະ ບັນດາກິດຈະກໍາ ສະເຫຼີມສະຫຼອງວັນສ້າງຕັ້ງການພົວພັນທາງການທູດ ຫວຽດນາມ - ລາວ ຄົບຮອບ 60 ປີ (5 ກັນຍາ 1962 – 5 ກັນຍາ 2022), ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືຮອບດ້ານ ຫວຽດນາມ - ລາວ ຄົບຮອບ 45 ປີ (18 ກໍລະກົດ 1977- 18 ກໍລະກົດ 2022); ສະເຫຼີມສະຫຼອງວັນໄຊຊະນະປະຫວັດສາດ ດຽນບຽນຟູ ຄົບຮອບ 70 ປີ (7 ພຶດສະພາ 1954 – 7 ພຶດສະພາ 2024).

3. ແນວລາວສອງແຂວງ ໄດ້ແລກປ່ຽນບົດຮຽນໃນການເຄື່ອນໄຫວວຽກງານແນວລາວ ກ່ຽວກັບ:

- ວຽກງານເຕົ້າໂຮມ, ສ້າງຄວາມສາມັກຄີບັນດາເຜົ່າ, ການປະຕິບັດປະຊາທິປະໄຕ, ເພີ່ມທະວີຄວາມປອງດອງ ໃນສັງຄົມສັງຄົມ. ວຽກງານໂຄສະນາ ສຶກສາອົບຮົມການເມືອງ - ແນວຄິດ ໃຫ້ປະຊາຊົນບັນດາເຜົ່າສອງແຂວງ ກ່ຽວ ກັບມູນເຊື້ອສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານ ລະຫວ່າງ ລາວ-ຫວຽດ ນາມ, ຫວຽດນາມ-ລາວ ໃຫ້ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈ.

- ບົດຮຽນປະສົບການ ໃນການເປັນເຈົ້າພາບ ເປີດ ແລະ ພັນຂະຫຍາຍ ປຸກລະດົມ ບັນດາຂະບວນການແຂ່ງຂັນ ໂດຍແນວລາວເປັນເຈົ້າພາບ ແລະ ເປີດ, ການປຸກລະດົມສະໜັບສະໜູນ ແລະ ການນໍາໃຊ້ບັນດາກອງທຶນ ເຊັ່ນ: ກອງທຶນຄົນທຸກຍາກ, ກອງທຶນສົງເຄາະ ແລະ ອື່ນໆ.

- ວຽກງານກໍ່ສ້າງພັກ, ກໍ່ສ້າງອົງການປົກຄອງທ້ອງຖິ່ນ, ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທໍາຂອງ ປະຊາຊົນ, ປະຕິບັດວຽກງານຕິດຕາມ ກວດກາ ແລະ ສ່ອງແສງສັງຄົມ, ສັງລວມ ເອົາຄໍາຄິດຄໍາເຫັນ ແລະ ຄໍາສະເໜີ ຂອງຜູ້ມີສິດເລືອກຕັ້ງ ແລະ ປະຊາຊົນ ເພື່ອສ່ອງແສງ ສະເໜີຂຶ້ນໃຫ້ ພັກ ແລະ ລັດ.

- ວຽກງານການເປີດກວ້າງ ແລະ ຍົກສູງຄຸນນະພາບການເຄື່ອນໄຫວວຽກງານການທູດປະຊາຊົນ, ເພີ່ມທະວີ ຄວາມສາມັກຄີມິດຕະພາບ ແລະຮ່ວມມືສາກົນ ໂດຍສະເພາະແມ່ນການຊຸກຍູ້ປະຊາຊົນບັນດາເຜົ່າ ທັງ 2 ປະເທດໄດ້ມີການໄປມາຫາສູ່ ແລກປ່ຽນດ້ານວັດທະນະທໍາ-ສັງຄົມ, ແລກປ່ຽນຊື້-ຂາຍສິນຄ້ານໍາກັນ ດ້ວຍບັນຍາກາດອັນດີ.

- ວຽກງານຍົກສູງຄວາມສາມາດປະຕິບັດງານ ຂອງລະບົບວຽກງານແນວໂຮມທຸກຂັ້ນ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງ ຂອງໜ້າທີ່ວຽກງານໃນໄລຍະໃໝ່.

**II. ທິດທາງແຜນການພົວພັນມິດຕະພາບ 2024 – 2026**

1. ແນວລາວ ສອງແຂວງສືບຕໍ່ເພີ່ມທະວີການໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ມູນເຊື້ອການປະຕິ ວັດ, ມິດຕະ ພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດເວົ້າລວມ ແລະ ເວົ້າສະເພາະ ລະຫວ່າງ ສອງແຂວງດຽນບຽນ - ຫຼວງພະບາງ ໃຫ້ແກ່ພະນັກງານ-ລັດຖະກອນ ຂອງແນວ ລາວ ສ້າງຊາດ ແລະ ປະຊາຊົນສອງແຂວງ.

2. ສອງແຂວງສືບຕໍ່ສົມທົບກັນໂຄສະນາເຜີຍແຜ່, ປຸກລະດົມປະຊາຊົນ ເຂົ້າຮ່ວມປົກປັກຮັກສາຊາຍແດນ ແລະ ຫຼັກໝາຍຊາຍແດນ; ເພີ່ມທະວີການຮ່ວມມືແຮກສ່ຽວ ລະຫວ່າງ ກຸ່ມບ້ານເຂດຊາຍແດນຂອງສອງຝ່າຍ ເພື່ອ ເພີ່ມທະວີຄວາມສາມັກຄີ, ຮ່ວມມືພັດທະນາເສດຖະກິດ-ສັງຄົມ, ຮ່ວມມືໃນວຽກງານໂຄສະນາເຜີຍແຜ່, ປຸກລະດົມຂົນຂວາຍ ປະຊາຊົນຢ່າງຕັ້ງໜ້າ ສະກັດກັ້ນ ແລະ ຕ້ານປະກົດການຍໍ້ທໍ້,

ຮັບປະກັນຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍສັງຄົມ, ບໍ່ລັກເຂົ້າ-ອອກເມືອງຜິດກົດໝາຍ, ແຕ່ງງານບໍ່ຖືກລະບຽບ, ການຄ້າຂາຍເຖື່ອນ...

3. ແນວລາວທັງສອງແຂວງໄດ້ເປັນເອກະພາບກັນ ເພີ່ມທະວີການຮ່ວມມື, ແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນປະສົບການໃນການເຄື່ອນໄຫວວຽກງານແນວລາວ ເພື່ອປັບປຸງບົດບາດຢ່າງບໍ່ຢຸດຢັ້ງ, ມີຄວາມຮັບຜິດຊອບໃນການ ຊີ້ນຳ-ນຳພາ ປະຕິບັດວຽກງານການເມືອງຂອງແນວລາວສອງແຂວງ ແລະ ພະນັກງານ-ລັດຖະກອນຂອງ ແຕ່ລະຝ່າຍ.

4. ແນວລາວສອງແຂວງ ເຫັນດີເປັນເອກະສັນກັນ ກຳນົດເວລາຈັດຕັ້ງກອງປະຊຸມພົບປະແລກປ່ຽນບົດຮຽນ ລະຫວ່າງສອງຝ່າຍ 2 ປີຕໍ່ຄັ້ງ ໂດຍພັດປ່ຽນກັນເປັນເຈົ້າພາບ.

**III. ການຈັດຕັ້ງປະຕິບັດ**

1. ສອງຝ່າຍໄດ້ເຫັນດີເປັນເອກະພາບມອບໃຫ້ ຂະແໜງປະຊາທິປະໄຕ ແລະ ກົດໝາຍຂອງຄະນະກຳມະການແນວໂຮມແຫ່ງຊາດແຂວງດຽນບຽນ ແລະ ຂະແໜງບໍລິຫານ ຄະນະກຳມະການແນວລາວສ້າງຊາດແຂວງຫຼວງພະບາງ ເປັນເສນາທິການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

2. ກອງປະຊຸມພົບປະແລກປ່ຽນບົດຮຽນ ຄັ້ງຕໍ່ໜ້າແມ່ນຈະຈັດຂຶ້ນທີ່ແຂວງຫຼວງພະບາງ, ສ່ວນວັນເວລາ ອັນ ລະອຽດ ແມ່ນແນວລາວທັງສອງແຂວງຈະໄດ້ປຶກສາຫາລື ແລະ ຕົກລົງເຫັນດີເປັນເອກະພາບກັນ.

ກອງປະຊຸມພົບປະພົບປະແລກປ່ຽນໄດ້ສິ້ນສຸດລົງເວລາ11:00 ຂອງວັນທີ 20 ມິຖຸນາ 2024, ທີ່ແຂວງດຽນບຽນ ສສ ຫວຽດນາມ.

ບົດບັນທຶກກອງປະຊຸມພົບປະແລກປ່ຽນສະບັບນີ້ໄດ້ສ້າງເປັນ (02) ສະບັບ ເປັນພາສາຫວຽດນາມ ແລະ ລາວ, ມີຄຸນຄ່າເທົ່າທຽມກັນ, ລ້ວນແຕ່ມີຄຸນຄ່າເທົ່າທຽມກັນ ແຕ່ລະຝ່າຍເກັບຮັກສາ (01) ສະບັບ.

ບົດບັນທຶກສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ມີອາຍຸນຳໃຊ້ຮອດວັນທີ 31/12/2026.

*ທີ່ແຂວງດຽນບຽນ, ວັນທີ 20 ມິຖຸນາ 2024*

**ຕາງໜ້າ**
**ຄະນະຜູ້ແທນແນວລາວສ້າງຊາດ**
**ແຂວງຫຼວງພະບາງ**
**ຫົວໜ້າຄະນະ**

**ບຸນສົມ ຄຸນມະນີ**

**ຕາງໜ້າ**
**ຄະນະຜູ້ແທນແນວໂຮມແຫ່ງຊາດຫວຽດນາມ**
**ແຂວງດຽນບຽນ**
**ຫົວໜ້າຄະນະ**

**ລໍ່ ວັນ ມິ່ງ**